ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ່ ໔໕໗/ປພຖຊ/໐໖໐໗໐໙**

# ບົດຄວາມ

## ຄຣູອາຈານ ຖືກຊູດຣີດແຮງງານ

ຄຣູແລະອາຈານ ສອນໜັງສື ໃນເຂດລ່ອງງື່ມ 400 ກວ່າຄົນ ບໍ່ໄດ້ຮັບເງິນ ມາແຕ່ເດືອນ ກຸມພາ 2009 (TV. Lao Star, 18/5/09) ໂດຍອ້າງວ່າ ພນັກງານເອົາເງິນໄປເບີກນັ້ນ,ຈອດຣົດໄວ້ແຄວລ່ອງງື່ມ, ແລ້ວມີພວກຄົນບໍ່ດີ ມາງັດແງະເອົາເງິນໄປ...ຄຣູ ແລະອາຈານເຫລົ່ານັ້ນ ຈຶ່ງບໍ່ໄດ້ຮັບເງິນເດືອນ.

ການໃຫ້ເຫດຜົນວ່າ ພນັກງານຈອດຣົດໄວ້, ມີພວກຄົນບໍ່ດີ ມາແງະເອົາເງິນໄປນັ້ນ, ມັນແມ່ນສາກລະຄອນຕົບຕາປະຊາຊົນ, ຫລອກໃຊ້ຄຣູ ອາຈານ ແຄບລ່ອງງື່ມ ໃຫ້ມີກຳລັງໃຈ ສອນໜັງສືອີກຕໍ່ໄປ. ໃນຄວາມເປັນຈິງແລ້ວ, ຢູ່ທະນາຄານ ມີແຕ່ບັນຊີຕົວເລກ, ບໍ່ມີເງິນຕົວຈິງ ຈະເອົາໄປເບີກໃຫ້ ພັກລັດບໍ່ຮູ້ຈະເຮັດຢ່າງໃດ ກໍເລີຍອອກມາເຫລັ້ນລະຄອນສາກຕື້ນໆນີ້ຂຶ້ນ... ແຕ່ສິ່ງສຳຄັນ ແມ່ນບັນດາ ຄຣູ ອາຈານ ເຫລົ່ານັ້ນ ຍັງບໍ່ທັນໄດ້ຮັບເງິນມາໄດ້ 3-4 ເດືອນແລ້ວ! ພັກຣັດ ຕ້ອງຊອກເງິນ ໄປຈ່າຍພວກເຂົາ ໂດຍໄວ..

ພັກຣັດ ໄດ້ໃຫ້ ສັນຍານາມ ວ່າ " **ຄຣູ ແມ່ນນັກວິສາວະກອນ ແຫ່ງດວງວິນຍານ. ການສຶກສາຕ້ອງໄປກ່ອນບາດກ້າວນຶ່ງ**" ແຕ່ເມື່ອໄດ້ຂຶ້ນຄອງອຳນາດແລ້ວ, ອາຊີບຄຣູ ກໍກາຍເປັນອາຊີບທີ່ບໍ່ມີຄວາມໝາຍ, ພັກຣັດ ບໍ່ໄດ້ໃຫ້ຄວາມສຳຄັນ, ບໍ່ໄດ້ເອົາໃຈໃສ່ ຕໍ່ຊີວິດການເປັນຢູ່ ຂອງພວກເຂົາ ໃຫ້ສົມກັບເປັນອາຊີບທີ່ຍາກ ອິດເມື່ອຍແລະມີຄວາມຮັບຜິດຊອບ ຕໍ່ຄວາມສຳເຣັດ ໃນການສຶກສາຂອງເດັກຢູ່ຕລອດເວລາ. ກ່ອນການສິດສອນ, ກໍໄດ້ມີການກະກຽມບົດສອນ. ຫລັງຈາກສອນແລ້ວ

ກໍຕ້ອງໄດ້ກວດແກ້ ປັບຝຶກຫັດຕື່ມອີກ, ນອກຈາກນີ້ ກໍຍັງຕ້ອງຄົ້ນຄວ້າ ເພີ້ມເຕີມຫລັກສູດການຮຽນການສອນ ເພື່ອຊ່ວຍໃຫ້ນັກຮຽນ ໄດ້ຮັບຄວາມສຳເຣັດ ໃນການຮ່ຳຮຽນ ຂອງເຂົາເຈົ້າ.

ການບໍ່ເບີກ ເງິນເດືອນໃຫ້ຄຣູອາຈານ ຢ່າງເປັນປົກກະຕິດັ່ງນີ້, ມັນມີຜົນສະທ້ອນ ຕໍ່ຊີວິດການເປັນຢູ່ຂອງຄຣູ ອາຈານ ຫລາຍທີ່ສຸດ! ມັນບໍ່ພຽງແຕ່ ເປັນການຂູດຮີດແຮງງານ ຢ່າງໄຣ້ມະນຸສທັມເທົ່ານັ້ນ, ມັນຍັງເປັນການສ້າງບາບກັມ ໃຫ້ທຸກໆຄົນໃນຄອບຄົວ ຂອງຄຣູອາຈານຕື່ມອີກດ້ວຍ, ເພາະເງິນເດືອນ ຂອງຄຣູອາຈານ ທີ່ໄດ້ມາດ້ວຍຄວາມບໍຣິສຸດໃຈນັ້ນ, ມັນບໍ່ພຽງແຕ່ ໄວ້ຊື້ເຂົ້າປາອາຫານປະຈຳວັນເທົ່ານັ້ນ, ຍັງຕ້ອງໄວ້ຊື້ເຄື່ອງນຸ່ງຫົ່ມ ໃຫ້ພວກລູກຫລານ ແລະຊື້ຢາປົວພຍາດ ເມື່ອເວລາເຈັບເປັນອີກດ້ວຍ.

ການບໍ່ເບີກເງິນເດືອນ ໃຫ້ຄຣູ ອາຈານ ຢ່າງເປັນປົກກະຕິ ກໍແມ່ນການທຳລາຍ ຂວັນ ແລະກຳລັງໃຈ ໃນການ ສິດສອນເດັກນັກຮຽນ ກໍຄືການປ່ອຍປະ ໃຫ້ນັກຮຽນ ເປັນໄປຕາມເວນຕາມກັມຂອງພວກເຂົາ. ໃນເມື່ອພັກຣັດ ມີອຳນາດຜເດັດການ ໃນກຳມືແລ້ວ ຍັງເມີນເສີຍ ຕໍ່ບັນຫານີ້, ຈະບໍ່ເອີ້ນວ່າພັກຣັດ ເປັນຜູ້ທຳລາຍຊາດຂອງຕົນໄດ້ຢ່າງໃດ?

ການທີ່ຄຣູ ອາຈານ ໃຫ້ໜັງສືພິມ ສຽງປະຊາຊົນ ລົງຂ່າວນັ້ນ, ເປັນການກະທຳ ທີ່ຖືກຕ້ອງທີ່ສຸດແລ້ວ, ເພາະມັນແມ່ນວິທີເປີດໂປ່ງ ການສໍ້ໂກງແຮງງານ ຄຣູ ອາຈານລາວ ທີ່ເຮັດວຽກດ້ວຍຄວາມບໍຣິສຸດ ສັດຊື່... ແຕ່ຖ້າຄຣູ ອາຈານ ຫາກເຮັດຕາມແບບ ທີ່ພັກຣັດພາເຮັດ...ເປັນຕົ້ນ ຂາຍໂຄງການພັທນາປະເທດ ໃຫ້ນັກທຸຣະກິຈ ແບບ **ສົ່ງໂຄງການອອກໄປ-ເງິນໃຕ້ໂຕະຕ້ອງເຂົ້າມາ(ເງິນສິນບົນ)** ແບບນີ້, ຄົງຈະໄດ້ຜົນກວ່າ ທີ່ຈະເອົາໄປລົງໜັງສືພິມ, ຕົວຢ່າງ: ເດືອນໃດ ທີ່ພັກຣັດບໍ່ເບີກເງິນເດືອນໃຫ້ເດືອນນັ້ນ, ກໍບໍ່ຕ້ອງສອນໜັງສື ພາກັນໄປຂອກຢູ່ຫາກິນ ເພື່ອລ້ຽງຊີບຂອງຕົນໄປເປັນວັນໆ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍວັນທີ ໄ໗ ມິຖຸນາ ໒໐໐໗**